ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 171 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20.08.2013

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການທ່ອງທ່ຽວ ( ສະບັບປັບປຸງ )

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ, ສະບັບເລກທີ 05/ ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 019 / ຄປຈ, ລົງວັນທີ 16 ສິງຫາ 2013.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການທ່ອງທ່ຽວ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                                 ເລກທີ 05 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 24 ກໍລະກົດ 2013

### ກອງປະຊຸມໄດ້ຕົກລົງ:

**ມາດຕາ 1.** ຮັບຮອງເອົາກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 24 ກໍລະກົດ 2013

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ເລກທີ 32 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2013

# ກົດໝາຍ

# ວ່າດ້ວຍ ການທ່ອງທ່ຽວ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານທ່ອງທ່ຽວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ປະສິດທິພາບ, ແຫຼ່ງທ່ອງທ່ຽວ ໄດ້ຮັບການອະນຸລັກ ບູລະນະ ແນໃສ່ ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ ທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ໃຫ້ຂະຫຍາຍຕົວ, ຍືນຍົງກາຍເປັນອຸດສາຫະກໍາທ່ອງທ່ຽວ ທີ່ທັນສະໄໝ, ເສີມສ້າງຄວາມເຂົ້າໃຈ ຊຶ່ງກັນ ແລະ ກັນ, ສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາກັບສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການທ່ອງທ່ຽວ**

ການທ່ອງທ່ຽວ ແມ່ນ ການເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນ ວັດທະນະທໍາ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະ ອື່ນໆ ໂດຍບໍ່ມີຈຸດປະສົງຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ.

ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ນັກທ່ອງທ່ຽວ** ໝາຍເຖິງ ບຸກຄົນທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນ ໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອຈຸດປະສົງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 2 ຂອງກົດໝາຍສະບັບນີ້;

2. **ກິດຈະການທ່ອງທ່ຽວ** ໝາຍເຖິງ ການເຄື່ອນໄຫວວຽກງານທ່ອງທ່ຽວ ກ່ຽວກັບການບໍລິການນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ ການທ່ຽວຊົມ, ການບູລະນະແຫຼ່ງທ່ອງທ່ຽວ, ການພັກເຊົາ, ການບໍລິການສະຖານທີ່ພັກແຮມ, ການນໍາທ່ຽວ;

3. **ທຸລະກິດທ່ອງທ່ຽວ** ໝາຍເຖິງ ການບໍລິການຂອງຫົວໜ່ວຍທຸລະກິດ ທາງດ້ານການເດີນທາງ, ອາຫານ, ການພັກແຮມ, ການນໍາທ່ຽວ ແລະ ອື່ນໆ ໃຫ້ແກ່ນັກທ່ອງທ່ຽວ;

4. **ທຸລະກິດພັກແຮມ** ໝາຍເຖິງ ການບໍລິການຂອງຫົວໜ່ວຍທຸລະກິດ ໃຫ້ແກ່ນັກທ່ອງທ່ຽວໃນການພັກເຊົາ ເຊັ່ນ ພັກຢູ່ໂຮງແຮມ, ເຮືອນພັກ, ເຮືອທ່ອງທ່ຽວ, ຫ້ອງພັກແຮມ ແລະ ສະຖານທີ່ພັກເຊົາອື່ນ;

5. **ໂຮງແຮມ** ໝາຍເຖິງ ສະຖານທີ່ພັກເຊົາ ຊຶ່ງປະກອບດ້ວຍສິບຫ້າຫ້ອງນອນຂຶ້ນໄປ ໂດຍມີສິ່ງອໍານວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ມີມາດຕະຖານ;

6. **ເຮືອນພັກ** ໝາຍເຖິງ ສະຖານທີ່ພັກເຊົາ ຊຶ່ງປະກອບດ້ວຍ ສິບສີ່ຫ້ອງນອນລົງມາ ແຕ່ບໍ່ໃຫ້ຫຼຸດຫ້າຫ້ອງນອນ, ມີສິ່ງອໍານວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ເໝາະສົມ ແລະ ການບໍລິການທີ່ມີມາດຕະຖານ;

7. **ຫ້ອງພັກ** ໝາຍເຖິງ ສະຖານທີ່ພັກເຊົາ ທີ່ມີສີ່ຫ້ອງນອນລົງມາ ແລະ ມີສິ່ງອໍານວຍຄວາມສະດວກອັນຈໍາເປັນ ໃຫ້ແກ່ຄົນເດີນທາງ;

8. **ບ່ອນພັກແຮມຕາມແຫຼ່ງທ່ອງທ່ຽວ (Resort-ຣີສອດ)** ໝາຍເຖິງ ສະຖານທີ່ພັກເຊົາ ທີ່ສ້າງຕັ້ງຂຶ້ນຕາມແຫຼ່ງທ່ອງທ່ຽວ ຊຶ່ງມີສິ່ງອໍານວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ມີມາດຕະຖານ;

9. **ບ່ອນພັກແຮມຂອງນັກຂັບຂີ່ (Motel-ໂມເຕັນ)** ໝາຍເຖິງ ສະຖານທີ່ພັກເຊົາ ທີ່ສ້າງຕັ້ງຂຶ້ນ ຕາມແຄມຖະໜົນຫຼວງ ສໍາລັບຜູ້ເດີນທາງທີ່ນໍາໃຊ້ຍານພາຫະນະ ຊຶ່ງມີສະຖານທີ່ຈອດລົດ ແລະ ສິ່ງອໍານວຍຄວາມສະດວກຂັ້ນພື້ນຖານ;

10. **ບ່ອນພັກແຮມເຄື່ອນທີ່** ໝາຍເຖິງ ສະຖານທີ່ພັກເຊົາ ທີ່ເຄື່ອນຍ້າຍໄປມາໄດ້ ຊຶ່ງປະກອບດ້ວຍ ເຮືອທ່ອງທ່ຽວ, ຕູ້ລົດໄຟ, ລົດທ່ອງທ່ຽວທີ່ມີຫ້ອງນອນ ແລະ ອື່ນໆ ໂດຍມີສິ່ງອໍານວຍຄວາມສະດວກ ແລະ ການບໍລິການທີ່ເໝາະສົມ;

11. **ຄ້າຍພັກແຮມ (Camp-ແຄັມ)** ໝາຍເຖິງ ສະຖານທີ່ພັກເຊົາ ຢູ່ໃນແຫຼ່ງທ່ອງທ່ຽວທໍາມະຊາດ ທີ່ສວຍງາມ ຊຶ່ງຈັດຂຶ້ນເພື່ອໃຫ້ນັກທ່ອງທ່ຽວ ກາງຕູບ (Tent-ເຕັນ) ແລະ ມີສິ່ງອໍານວຍຄວາມສະດວກຂັ້ນພື້ນຖານ;

12. **ເຮືອນພັກແຮມ (Homestay-ໂຮມສະເຕ)** ໝາຍເຖິງ ເຮືອນປະຊາຊົນ ທີ່ມີຫ້ອງນອນ ແລະ ມີສິ່ງອຳນວຍຄວາມສະດວກອັນຈຳເປັນໄວ້ບໍລິການນັກທ່ອງທ່ຽວ;

13. **ພະນັກງານນຳທ່ຽວ** ໝາຍເຖິງ ບຸກຄົນ ທີ່ບໍລິການພານັກທ່ອງທ່ຽວໄປທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ ແລະ ມີໜ້າທີ່ອະທິບາຍ, ບັນລະຍາຍ, ໃຫ້ຂໍ້ມູນ, ຄວາມຮູ້ ແກ່ນັກທ່ອງທ່ຽວກ່ຽວກັບປະຫວັດຄວາມເປັນມາຂອງສະຖານທີ່ດັ່ງກ່າວຢ່າງຖືກຕ້ອງ;

14. **ຮ້ານອາຫານ** ໝາຍເຖິງ ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ;

15. **ພັດຕາຄານ** ໝາຍເຖິງ ອາຄານ ຫຼື ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ຊຶ່ງມີສະຖານທີ່ກວ້າງຂວາງ ແລະ ສາມາດໃຫ້ການບໍລິການງານຕ່າງໆ;

16. **ສວນອາຫານ** ໝາຍເຖິງ ສະຖານທີ່ ທີ່ມີເນື້ອທີ່ກວ້າງຂວາງ ແລະ ມີທິວທັດສວຍງາມ ຊຶ່ງໃຫ້ການບໍລິການອາຫານ ແລະ ເຄື່ອງດື່ມ;

17. **ຮ້ານກິນດື່ມ** ໝາຍເຖິງ ສະຖານທີ່ ທີ່ມີເນື້ອທີ່ເໝາະສົມ ຊຶ່ງໃຫ້ການບໍລິການອາຫານເບົາ ແລະ ເຄື່ອງດື່ມເປັນຕົ້ນຕໍ;

18. **ການທ່ອງທ່ຽວທາງດ້ານທຳມະຊາດ** ໝາຍເຖິງ ການທ່ຽວຊົມຊັບພະຍາກອນທ່ອງທ່ຽວ ຕາມທຳມະຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ເພື່ອເປັນການພັກຜ່ອນ, ການມ່ວນຊື່ນ, ກິລາ, ການສົ່ງເສີມສຸຂະພາບ ແລະ ການສຶກສາຄົ້ນຄວ້າ;

19. **ການທ່ອງທ່ຽວທາງດ້ານວັດທະນະທຳ** ໝາຍເຖິງ ການທ່ຽວຊົມຊັບພະຍາກອນທ່ອງທ່ຽວທາງດ້ານວັດທະນະທຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂໍ້ 1 ຂອງກົດໝາຍສະບັບນີ້ ເພື່ອເປັນການພັກຜ່ອນ, ການມ່ວນຊື່ນ, ການສຶກສາຄົ້ນຄວ້າ;

20. **ການທ່ອງທ່ຽວທາງດ້ານປະຫວັດສາດ** ໝາຍເຖິງ ການທ່ຽວຊົມຊັບພະຍາກອນທ່ອງທ່ຽວທາງດ້ານປະຫວັດສາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂໍ້ 2 ຂອງກົດໝາຍສະບັບນີ້ ເພື່ອເປັນການລະນຶກ ແລະ ການສຶກສາຄົ້ນຄວ້າ;

21. **ຊັບພະຍາກອນທ່ອງທ່ຽວ** ໝາຍເຖິງ ທ່າແຮງທາງດ້ານການທ່ອງທ່ຽວ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ;

22. **ແຫຼ່ງທ່ອງທ່ຽວ** ໝາຍເຖິງ ຊັບພະຍາກອນທ່ອງທ່ຽວ ທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ເພື່ອສາມາດດຶງດູດນັກທ່ອງທ່ຽວ ໃຫ້ເດີນທາງມາທ່ຽວຊົມ;

23. **ອຸດສາຫະກຳທ່ອງທ່ຽວ** ໝາຍເຖິງ ການບໍລິການ ແກ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດຢ່າງເປັນລະບົບ ຄົບວົງຈອນ ຊຶ່ງປະກອບດ້ວຍ ທຸລະກິດຂົນສົ່ງ, ແຫຼ່ງທ່ອງທ່ຽວ, ນຳທ່ຽວ, ທີ່ພັກແຮມ, ອາຫານ, ເຄື່ອງທີ່ລະນຶກ, ການວາງສະແດງ, ນິທັດສະການ, ເທດສະການ, ງານບຸນ ແລະ ອື່ນໆ ຊຶ່ງນຳໃຊ້ແຮງງານ, ມີການລົງທຶນ ແລະ ວິຊາສະເພາະສູງ, ໃຊ້ເຕັກນິກທີ່ທັນສະໄໝ, ມີການວາງແຜນ, ການຕະຫຼາດ ແລະ ການຈັດຕັ້ງຢ່າງເປັນລະບົບ;

24. **ຜະລິດຕະພັນທ່ອງທ່ຽວ** ໝາຍເຖິງ ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນ ເພື່ອເປັນສິ່ງຮອງຮັບ, ສະໜອງ ແລະ ບໍລິການໃຫ້ນັກທ່ອງທ່ຽວ;

25. **ການບັນເທີງ** ໝາຍເຖິງ ຄວາມເບີກບານມ່ວນຊື່ນ, ໃຫ້ຄວາມສຸກສັນ ດ້ວຍສຽງເພງ, ສຽງດົນຕີ, ຂັບລຳ, ຕະຫຼົກ, ຟ້ອນ, ສະແດງລະຄອນ ແລະ ອື່ນໆ;

26. **ນິທັດສະການ** ໝາຍເຖິງ ງານວາງສະແດງສິນຄ້າ, ຜະລິດຕະພັນ ຫຼື ກິດຈະກຳຂອງມວນຊົນ ທີ່ ຈັດຂຶ້ນບໍ່ເປັນປົກກະຕິ ແລະ ບໍ່ເປັນລັກສະນະປະເພນີ ຢູ່ຕາມສະຖານທີ່ໃດໜຶ່ງ ທີ່ໄດ້ຮັບອະນຸຍາດຈາກທາງການ ເພື່ອໃຫ້ມວນຊົນໄດ້ທ່ຽວຊົມ, ຊື້, ຂາຍ, ແລກປ່ຽນ ແລະ ອື່ນໆ;

27. **ເທດສະການ** ໝາຍເຖິງ ການຈັດງານບຸນປະເພນີ ແລະ ງານສະເຫຼີມສະຫຼອງຕ່າງໆ ປະຈຳຊາດ ຫຼື ທ້ອງຖິ່ນ.

## ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານທ່ອງທ່ຽວ

ລັດ ຖືເອົາວຽກງານທ່ອງທ່ຽວ ເປັນບູລິມະສິດໜຶ່ງ ໃນການພັດທະນາເສດຖະກິດ-ສັງຄົມ ເພື່ອສົ່ງເສີມການຜະລິດສິນຄ້າ, ການບໍລິການ, ການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນ.

ລັດ ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃຫ້ມີຫຼາຍສີສັນເປັນໜ້າທ່ອງທ່ຽວ, ກາຍເປັນແຫຼ່ງທ່ອງທ່ຽວສີຂຽວ ທີ່ມີຄວາມຍືນຍົງ ແລະ ກາຍເປັນອຸດສາຫະກຳ ແລະ ທັນສະໄໝ.

ລັດ ຊຸກຍູ້ ສົ່ງເສີມ, ອຳນວຍຄວາມສະດວກ ແລະ ປົກປ້ອງສິດ ຜົນປະໂຫຍດຂອງ ບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນເຂົ້າໃນການພັດທະນາ ແລະ ການສົ່ງເສີມການທ່ອງທ່ຽວ ດ້ວຍການໂຄສະນາ, ໃຫ້ຂໍ້ມູນຂ່າວສານ, ການຈັດນິທັດສະການ, ເທດສະການ, ງານບຸນກ່ຽວກັບສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ມູນເຊື້ອ ພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ.

## ມາດຕາ 5 (ໃໝ່) ຫຼັກການກ່ຽວກັບວຽກງານທ່ອງທ່ຽວ

ວຽກງານທ່ອງທ່ຽວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂອງຂະແໜງການທ່ອງທ່ຽວ;
2. ຮັບປະກັນຄວາມສະຫງົບ, ປອດໄພ, ເປັນລະບຽບຮຽບຮ້ອຍ, ຍືນຍົງ, ສະດວກ, ວ່ອງໄວ, ສະເໝີພາບ ແລະ ຍຸຕິທຳ ໂດຍການມີສ່ວນຮ່ວມຂອງປະຊາຊົນ;
3. ຮັບປະກັນ ການປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງນັກທ່ອງທ່ຽວ, ບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວພັນກັບການທ່ອງທ່ຽວ;
4. ຮັບປະກັນ ການພັດທະນາການທ່ອງທ່ຽວ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ທຳມະຊາດ, ວັດທະນະທຳ ແລະ ມູນເຊື້ອປະຫວັດສາດຂອງຊາດ;
5. ຮັບປະກັນການທ່ອງທ່ຽວໃຫ້ມີຄຸນນະພາບ, ຍືນຍົງ ແລະ ເຊື່ອມໂຍງກັບຕ່າງປະເທດ, ພາກພື້ນ ແລະ ສາກົນ.

ມາດຕາ 6 (ປັບປຸງ) ພັນທະຂອງບຸກຄົນ ແລະ ການຈັດຕັ້ງ

ເພື່ອເປັນການສົ່ງເສີມການທ່ອງທ່ຽວ ບຸກຄົນ ແລະ ການຈັດຕັ້ງພາຍໃນ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມ, ສິນລະປະ, ວັນນະຄະດີ, ຫັດຖະກຳ ທີ່ເປັນ ເອກະລັກສະເພາະ, ຊັບພະຍາກອນທ່ອງທ່ຽວ, ສິ່ງແວດລ້ອມອັນອຸດົມຮັ່ງມີ ແລະ ສວຍງາມ ຂອງຊາດ.

ບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ ທີ່ເຂົ້າມາ ສປປ ລາວ ກໍມີພັນທະປະກອບສ່ວນເຂົ້າໃນການພັດທະນາ ແລະ ສົ່ງເສີມ ວຽກງານທ່ອງທ່ຽວ, ປົກປັກຮັກສາແຫຼ່ງທ່ອງທ່ຽວໃຫ້ມີຄວາມຍືນຍົງພ້ອມທັງເຄົາລົບ, ນັບຖື ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງລາວ.

ມາດຕາ 7 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການທ່ອງທ່ຽວ, ການດຳເນີນທຸລະກິດ ໃນຂົງເຂດການທ່ອງທ່ຽວຂອງ ສປປ ລາວ.

ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທ່ອງທ່ຽວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການສ້າງ, ຝຶກອົບຮົມພະນັກງານ, ການຍາດແຍ່ງການຊ່ວຍເຫຼືອ ເພື່ອເຮັດໃຫ້ການທ່ອງທ່ຽວໄດ້ຮັບການພັດທະນາ ແລະ ການບໍລິການການທ່ອງທ່ຽວໄດ້ມາດຕະຖານສາກົນ.

## ພາກທີ II
## ຊັບພະຍາກອນທ່ອງທ່ຽວ
### ໝວດທີ 1
### ປະເພດຊັບພະຍາກອນທ່ອງທ່ຽວ

ມາດຕາ 9 ປະເພດຊັບພະຍາກອນທ່ອງທ່ຽວ

ຊັບພະຍາກອນທ່ອງທ່ຽວແບ່ງອອກເປັນ ສອງ ປະເພດຄື:

1. ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ;
2. ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ.

### ມາດຕາ 10 ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ

ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ປະກອບດ້ວຍ ທັດສະນີຍະພາບ, ຜາ, ຖ້ຳ, ພູພຽງ, ພູສູງ, ພູໄຟ, ທົ່ງພຽງ, ປ່າໄມ້, ພືດພັນ, ສັດປ່າ, ສັດນ້ຳ, ແມງໄມ້, ດອກໄມ້, ແມ່ນ້ຳ, ດອນ, ຫາດຊາຍ, ໜອງ, ບຶງ, ນ້ຳຕົກຕາດ, ແກ້ງ, ບໍ່ນ້ຳຮ້ອນ, ປາກົດການທຳມະຊາດ ແລະ ອື່ນໆ.

### ມາດຕາ 11 (ປັບປຸງ) ຊັບພະຍາກອນທ່ອງທ່ຽວທີ່ມະນຸດສ້າງຂຶ້ນ

ຊັບພະຍາກອນທ່ອງທ່ຽວ ທີ່ມະນຸດສ້າງຂຶ້ນ ປະກອບດ້ວຍ:

1. ຊັບພະຍາກອນທ່ອງທ່ຽວທາງດ້ານວັດທະນະທຳ ເຊັ່ນ ສິລະປະກຳ, ສະຖາປັດຕະຍະກຳ, ປູຊະນີຍະສະຖານ, ບູຮານວັດຖຸ, ບູຮານສະຖານ, ວັດວາອາຮາມ, ອາຄານ ບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ, ວິຖີຊີວິດ, ສູນການຄ້າ, ສູນວາງສະແດງ ແລະ ອື່ນໆ;

2. ຊັບພະຍາກອນທ່ອງທ່ຽວທາງດ້ານປະຫວັດສາດ ເຊັ່ນ ຫໍພິພິທະພັນ, ອະນຸສອນສະຖານ, ຫໍໂຮງ, ສະຖານທີ່ເກີດ, ອາໄສ ແລະ ເຮັດວຽກຂອງບຸກຄົນສຳຄັນ, ຮ່ອງຮອຍສະໝໍລະພູມ ແລະ ອື່ນໆ;

3. ຊັບພະຍາກອນທ່ອງທ່ຽວຕາມແບບທຳມະຊາດ ເຊັ່ນ ສວນອຸທິຍານ, ສວນສະໜຸກ, ສວນສັດ, ສະຖານທີ່ຈຳລອງ ແລະ ອື່ນໆ.

## ໝວດທີ 2
## ແຫຼ່ງທ່ອງທ່ຽວ

### ມາດຕາ 12 (ປັບປຸງ) ການສຳຫຼວດ ແລະ ຂຶ້ນທະບຽນແຫຼ່ງທ່ອງທ່ຽວ

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການ ສຳຫຼວດ, ເກັບກຳ, ຂຶ້ນທະບຽນ, ຄົ້ນຄວ້າຮຽບຮຽງປະຫວັດ ແຫຼ່ງທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ໂດຍສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

### ມາດຕາ 13 ການຈັດລະດັບແຫຼ່ງທ່ອງທ່ຽວ

ແຫຼ່ງທ່ອງທ່ຽວໃນ ສປປ ລາວ ແບ່ງອອກເປັນສອງ ລະດັບ ດັ່ງນີ້:

1. ລະດັບຊາດ;
2. ລະດັບທ້ອງຖິ່ນ.

### ມາດຕາ 14 ແຫຼ່ງທ່ອງທ່ຽວລະດັບຊາດ

ແຫຼ່ງທ່ອງທ່ຽວລະດັບຊາດ ແມ່ນ ແຫຼ່ງທ່ອງທ່ຽວ ຊຶ່ງເປັນມໍລະດົກລະດັບຊາດ, ພາກພື້ນ ຫຼື ລະດັບໂລກ ທີ່ໄດ້ຮັບຄວາມນິຍົມສູງ, ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງ

ປະເທດ ເຂົ້າມາທ່ຽວຊົມເປັນຈຳນວນຫຼາຍ ແລະ ເປັນທີ່ຮູ້ຈັກຢ່າງກວ້າງຂວາງ, ມີພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ ແກ່ນັກທ່ອງທ່ຽວ ແລະ ມີຄວາມສຳຄັນໃນການສ້າງລາຍໄດ້ໃຫ້ແກ່ການທ່ອງທ່ຽວ.

**ມາດຕາ 15 (ປັບປຸງ) ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ**

ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ ແມ່ນ ແຫຼ່ງທ່ອງທ່ຽວທີ່ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວພາຍໃນປະເທດເປັນສ່ວນຫຼາຍ, ມີພື້ນທີ່ຊຶ່ງຈະສາມາດພັດທະນາໄດ້, ມີສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ແລະ ມີຄວາມສຳຄັນໃນການສ້າງລາຍໄດ້ໃຫ້ແກ່ທ້ອງຖິ່ນ.

ແຫຼ່ງທ່ອງທ່ຽວລະດັບທ້ອງຖິ່ນ ກວມເອົາແຫຼ່ງທ່ອງທ່ຽວລະດັບແຂວງ, ເມືອງ ແລະ ລະດັບຊຸມຊົນ.

## ພາກທີ III
## ກິດຈະການ ການທ່ອງທ່ຽວ
## ໝວດທີ 1
## ການໂຄສະນາການທ່ອງທ່ຽວ

**ມາດຕາ 16 (ປັບປຸງ) ຈຸດປະສົງການໂຄສະນາ**

ການໂຄສະນາ ມີຈຸດປະສົງເຮັດໃຫ້ພົນລະເມືອງເຂົ້າໃຈຄວາມສຳຄັນ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສົ່ງເສີມການທ່ອງທ່ຽວ, ເຮັດໃຫ້ນັກທ່ອງທ່ຽວພາຍໃນມີຄວາມທະນົງໃຈ ເດີນທາງທ່ຽວຊົມ ປະເທດຕົນ ເປັນຕົ້ນ ສະຖານທີ່ທ່ອງທ່ຽວຕ່າງໆ ແລະ ເຮັດໃຫ້ນັກທ່ອງທ່ຽວຕ່າງປະເທດ ຮູ້ຈັກ ສປປ ລາວ ເປັນຈຸດທ່ອງທ່ຽວທີ່ໜ້າສົນໃຈ, ຕ້ອງການມາທ່ຽວຊົມ ແລະ ສຶກສາຮຽນຮູ້ທັງເປັນການເປີດກວ້າງຕະຫຼາດການທ່ອງທ່ຽວຂອງລາວ ໃຫ້ນັບມື້ນັບກວ້າງຂວາງ.

**ມາດຕາ 17 (ປັບປຸງ) ເນື້ອໃນການໂຄສະນາ**

ການໂຄສະນາການທ່ອງທ່ຽວ ຕ້ອງເລັ່ງໃສ່ເນື້ອໃນທີ່ສຳຄັນ ເປັນຕົ້ນ ສະຖານທີ່ທ່ອງທ່ຽວ, ຄວາມສວຍງາມ, ຄວາມໂດດເດັ່ນຂອງຊັບພະຍາກອນ ແລະ ຜະລິດຕະພັນທ່ອງທ່ຽວ ທີ່ມີເອກະລັກຂອງຊາດ, ຄຸນຄ່າທາງດ້ານທຳມະຊາດ, ວັດທະນະທຳ, ປະຫວັດສາດ, ການບໍລິການທີ່ມີລັກສະນະດຶງດູດ ແລະ ສ້າງຄວາມປະທັບໃຈ ໃຫ້ແກ່ນັກທ່ອງທ່ຽວ.

**ມາດຕາ18 (ປັບປຸງ) ຮູບການ ແລະ ວິທີການໂຄສະນາ**

ການໂຄສະນາການທ່ອງທ່ຽວ ນຳໃຊ້ຮູບການ ແລະ ວິທີການ ດັ່ງນີ້:

1. ນິທັດສະການ, ເທດສະການ, ງານບຸນ, ງານວາງສະແດງການທ່ອງທ່ຽວລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນ ຫຼື ສາກົນ;

2. ຜ່ານລະບົບທາງສື່ເອເລັກໂຕຣນິກ ແລະ ສື່ສິ່ງພິມທັງພາຍໃນ ແລະ ຕ່າງປະເທດ;
3. ຜ່ານການປະຊາສໍາພັນກ່ຽວກັບງານບຸນ, ກິດຈະກໍາສົ່ງເສີມການທ່ອງທ່ຽວອື່ນໆ;
4. ການຈັດຢັ້ງມຍາມສະຖານທີ່ທ່ອງທ່ຽວ;
5. ຮູບການ ແລະ ວິທີການອື່ນ ທີ່ເປັນການສົ່ງເສີມການທ່ອງທ່ຽວ ລາວ.

## ໝວດທີ 2
## ການສື່ສານ ການທ່ອງທ່ຽວ

### ມາດຕາ 19 (ປັບປຸງ) ການສື່ສານ

ບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ສາມາດໄດ້ຮັບຄວາມສະດວກໃນການຕິດຕໍ່ສື່ສານ, ເກັບກໍາຂໍ້ມູນ ແລະ ຊອກຮູ້ສິ່ງໃໝ່ໆ ກ່ຽວກັບການທ່ອງທ່ຽວຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ.

### ມາດຕາ 20 ການສະໜອງຂໍ້ມູນຂ່າວສານ

ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນ, ຂ່າວສານກ່ຽວກັບການທ່ອງທ່ຽວໃຫ້ຖືກຕ້ອງ, ທັນການ ແລະ ເປັນລະບົບທາງດ້ານແຫຼ່ງທ່ອງທ່ຽວ, ການເດີນທາງ, ບ່ອນພັກແຮມ, ຮ້ານອາຫານ, ສິ່ງທີ່ຄວນ ແລະ ບໍ່ຄວນປະຕິບັດ ແລະ ອື່ນໆ.

### ມາດຕາ 21 ການແນະນໍາເຕືອນໄພ

ອົງການທີ່ກ່ຽວຂ້ອງ ຕ້ອງໃຫ້ຂໍ້ມູນ, ຂ່າວສານ, ຊີ້ແຈງ ກ່ຽວກັບເຫດການສຸກເສີນ ທີ່ເກີດຂຶ້ນແລ້ວ ຫຼື ອາດຈະເກີດຂຶ້ນ ຊຶ່ງສ້າງຜົນກະທົບຕໍ່ນັກທ່ອງທ່ຽວ, ພາບພົດການທ່ອງທ່ຽວ ພ້ອມທັງ ໃຫ້ຄໍາແນະນໍາກ່ຽວກັບມາດຕະການປ້ອງກັນຄວາມປອດໄພ ເຊັ່ນ ກໍລະນີແຜ່ນດິນໄຫວ, ນໍ້າຖ້ວມ, ໄຟໄໝ້, ລົມພາຍຸ, ພະຍາດລະບາດ.

## ໝວດທີ 3
## ການຂົນສົ່ງທ່ອງທ່ຽວ

### ມາດຕາ 22 ພາຫະນະຂົນສົ່ງ

ພາຫະນະຂົນສົ່ງນັກທ່ອງທ່ຽວ ປະກອບດ້ວຍ ເຮືອບິນ, ລົດ, ເຮືອ ແລະ ພາຫະນະຂົນສົ່ງອື່ນ ໂດຍອີງໃສ່ຄວາມຕ້ອງການຂອງນັກທ່ອງທ່ຽວ.

**ມາດຕາ 23 (ປັບປຸງ) ມາດຕະຖານພາຫະນະຂົນສົ່ງທ່ອງທ່ຽວ**

ພາຫະນະຂົນສົ່ງທ່ອງທ່ຽວ ຕ້ອງຮັບປະກັນທາງດ້ານຈຳນວນ ແລະ ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານ, ອາຍຸການນຳໃຊ້ຖືກຕ້ອງຕາມເຕັກນິກຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ; ຮັບປະກັນຄວາມປອດໄພ, ຄວາມສະອາດ, ການບໍລິການດີ ແລະ ມີການປະກັນໄພ.

**ມາດຕາ 24 (ປັບປຸງ) ການບໍລິການຂົນສົ່ງນັກທ່ອງທ່ຽວ**

ການບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງດຳເນີນໄປຕາມແຜນການ, ລາຍການ ແລະ ເງື່ອນໄຂທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ຜູ້ບໍລິການຂົນສົ່ງນັກທ່ອງທ່ຽວ ຕ້ອງມີສຸຂະພາບແຂງແຮງດີ, ມີມະນຸດສຳພັນດີ, ໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ກ່ຽວກັບວຽກງານທ່ອງທ່ຽວ ແລະ ມີຄວາມຮັບຜິດຊອບສູງ.

## ໝວດທີ 4
## ສະຖານທີ່ພັກແຮມ

**ມາດຕາ 25 (ປັບປຸງ) ສະຖານທີ່ພັກແຮມ**

ສະຖານທີ່ພັກແຮມ ປະກອບດ້ວຍ ໂຮງແຮມ, ເຮືອນພັກ, ບ່ອນພັກແຮມ ຕາມແຫຼ່ງທ່ອງທ່ຽວ, ບ່ອນພັກແຮມຂອງນັກຂັບຂີ່, ຄ້າຍພັກແຮມ, ເຮືອນພັກແຮມ, ເຮືອທ່ອງທ່ຽວ ທີ່ມີຫ້ອງນອນ, ລົດທ່ອງທ່ຽວທີ່ມີຫ້ອງນອນເຄື່ອນທີ່ ແລະ ສະຖານທີ່ພັກແຮມອື່ນ ທີ່ສະໜອງຫ້ອງພັກ ໃຫ້ແກ່ນັກທ່ອງທ່ຽວ ພ້ອມດ້ວຍການບໍລິການອັນຈຳເປັນ.

**ມາດຕາ 26 ລະດັບຂອງສະຖານທີ່ພັກແຮມ**

ສະຖານທີ່ພັກແຮມມີຫຼາຍລະດັບ ການຈັດລະດັບ ແມ່ນແນໃສ່ກຳນົດມາດຕະຖານ ແລະ ຄຸນນະພາບຂອງສະຖານທີ່ພັກແຮມ ເພື່ອຕອບສະໜອງໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ.

**ມາດຕາ 27 ການບໍລິການພັກແຮມ**

ການບໍລິການພັກແຮມ ຕ້ອງຮັບປະກັນຄຸນນະພາບ, ຄວາມສະອາດ, ຄວາມສະດວກສະບາຍ ແລະ ຄວາມປອດໄພ.

ຜູ້ໃຫ້ບໍລິການພັກແຮມ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການພັກແຮມ ໃນລະດັບອັນແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມແຈ່ມໃສ ແລະ ອື່ນໆ ເປັນທີ່ພໍໃຈແກ່ນັກທ່ອງທ່ຽວ.

ມາດຕາ 28 ການກຳນົດຄ່າພັກແຮມ

ຄ່າພັກແຮມ ຕ້ອງສົມເຫດສົມຜົນ, ແທດເໝາະກັບລະດັບ ຫຼື ມາດຕະຖານ ຂອງສະຖານທີ່ພັກແຮມນັ້ນໆ. ການປ່ຽນແປງຄ່າພັກແຮມ ຕ້ອງແຈ້ງລ່ວງໜ້າໃຫ້ນັກທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນເວລາອັນເໝາະສົມພ້ອມດ້ວຍເຫດຜົນ.

## ໝວດທີ 5
## ອາຫານ ແລະ ເຄື່ອງດື່ມ

ມາດຕາ 29 (ປັບປຸງ) ການບໍລິການອາຫານ ແລະ ເຄື່ອງດື່ມ

ອາຫານ ແລະ ເຄື່ອງດື່ມທີ່ບໍລິການໃຫ້ນັກທ່ອງທ່ຽວ ຕ້ອງຮັບປະກັນຄຸນນະພາບ, ມາດຕະຖານ, ຄວາມປອດໄພ, ຄວາມສະອາດຖືກຕ້ອງຕາມຫຼັກອະນາໄມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ອາຫານ.

ອາຫານ ແລະ ເຄື່ອງດື່ມ ທີ່ບໍລິການໃຫ້ນັກທ່ອງທ່ຽວ ຕ້ອງມີຫຼາຍປະເພດ ເພື່ອໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ ແລະ ບໍລິການຢູ່ບ່ອນເໝາະສົມ.

ຜູ້ໃຫ້ບໍລິການອາຫານ ແລະ ເຄື່ອງດື່ມ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະ ດ້ານການບໍລິການໃນລະດັບ ທີ່ແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມ ແຈ່ມໃສ ແລະ ອື່ນໆ ເປັນທີ່ພໍໃຈແກ່ນັກທ່ອງທ່ຽວ.

ມາດຕາ 30 (ໃໝ່) ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ

ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ປະກອບດ້ວຍ ຮ້ານອາຫານ, ພັດຕະຄານ, ສວນອາຫານ, ຫ້ອງອາຫານ ແລະ ຮ້ານກິນດື່ມ.

ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ຕ້ອງຕັ້ງຢູ່ບ່ອນເໝາະສົມ, ສະດວກສະບາຍ, ມີຄວາມສະອາດ ແລະ ປອດໄພ.

ມາດຕາ 31 (ໃໝ່) ການຈັດລະດັບສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ

ການຈັດລະດັບສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ແມ່ນ ການກຳນົດມາດຕະຖານ, ຄຸນນະພາບອາຫານ, ເຄື່ອງດື່ມ ແລະ ການບໍລິການ ເພື່ອສະໜອງໃຫ້ນັກທ່ອງທ່ຽວ ແລະ ບຸກຄົນທົ່ວໄປໄດ້ຮັບການບໍລິໂພກ ຢ່າງປອດໄພ ແລະ ມີຫຼາຍທາງເລືອກ.

ມາດຕາ 32 (ໃໝ່) ລາຄາອາຫານ ແລະ ເຄື່ອງດື່ມ

ອາຫານ ແລະ ເຄື່ອງດື່ມ ຕ້ອງມີລາຄາສົມເຫດສົມຜົນ, ແທດເໝາະກັບປະເພດອາຫານ, ລະດັບການບໍລິການ ແລະ ສະຖານທີ່ຂອງຮ້ານອາຫານ.

ຮ້ານອາຫານ ຕ້ອງໃຫ້ມີປື້ມລາຍການອາຫານ ແລະ ເຄື່ອງດື່ມ ພ້ອມທັງກຳນົດລາຄາ ຈະແຈ້ງ.

## ໝວດທີ 6
## ການບັນເທີງ ແລະ ການສົ່ງເສີມສຸຂະພາບ

### ມາດຕາ 33 ການບັນເທີງ

ການບັນເທີງ ປະກອບດ້ວຍ ການສະແດງດົນຕີ, ການສະແດງສິລະປະວັນນະຄະດີ, ການຟ້ອນ, ການຮ້ອງເພງ, ການຂັບລຳພື້ນເມືອງ, ດົນຕີສາກົນ ແລະ ອື່ນໆ ຊຶ່ງສະແດງເຖິງເອກະລັກທາງດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ, ສິ່ງຍອດຍິ່ງ ແລະ ກ້າວໜ້າຂອງໂລກ.

ການບັນເທີງ ຈັດຂຶ້ນຢູ່ສະຖານທີ່ພັກແຮມ, ຮ້ານອາຫານ ຫຼື ຢູ່ສະຖານທີ່ສະເພາະ.

### ມາດຕາ 34 (ໃໝ່) ປະເພດການບໍລິການບັນເທີງ

ການບໍລິການບັນເທີງ ປະກອບດ້ວຍ ຄາຣະໂອເກະ, ພັບ, ດິດສະໂກເທັກ, ບາຣ, ສະເນັກບາຣ, ຄອນເສີດ ແລະ ອື່ນໆ

### ມາດຕາ 35 (ໃໝ່) ສະຖານທີ່ບັນເທີງ

ການບັນເທີງ ສາມາດຈັດຂຶ້ນຢູ່ສະຖານທີ່ບັນເທີງສະເພາະ ແລະ ຢູ່ສະຖານທີ່ພັກແຮມ, ຮ້ານອາຫານ, ພັດຕາຄານ, ສວນອາຫານ, ຮ້ານກິນດື່ມ ແລະ ອື່ນໆ.

### ມາດຕາ 36 (ໃໝ່) ລະດັບສະຖານທີ່ບັນເທີງ

ການຈັດລະດັບສະຖານທີ່ບັນເທີງ ແມ່ນ ການກຳນົດມາດຕະຖານຂອງລະບົບແສງ, ສີ, ສຽງ, ການແຕ່ງກາຍ, ຄວາມສະອາດ, ຄວາມປອດໄພ, ຄຸນນະພາບຂອງການບໍລິການ ເພື່ອສະໜອງໃຫ້ຜູ້ໃຊ້ບໍລິການມີຄວາມສຸກ, ຄວາມເພີດເພີນ, ຄວາມມ່ວນຊື່ນ ແລະ ຄວາມປອດໄພ.

### ມາດຕາ 37 (ໃໝ່) ການບໍລິການບັນເທີງ

ການບໍລິການບັນເທີງ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະດວກສະບາຍ, ຄວາມສະອາດ ແລະ ບໍ່ມີສຽງລົບກວນບຸກຄົນອື່ນ ທີ່ຢູ່ພາຍນອກ ຫຼື ບໍລິເວນໃກ້ຄຽງສະຖານທີ່ບັນເທີງ.

ຜູ້ໃຫ້ບໍລິການບັນເທີງ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການ ການບັນເທີງໃນລະດັບອັນແນ່ນອນ, ມີມະນຸດສຳພັນດີ, ສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມແຈ່ມໃສ, ສຸຂະພາບແຂງແຮງດີ.

**ມາດຕາ 38 (ປັບປຸງ) ການສົ່ງເສີມສຸຂະພາບ**

ການສົ່ງເສີມສຸຂະພາບ ປະກອບດ້ວຍ ການຫັດກາຍະບໍລິຫານ, ນວດແຜນບູຮານ, ຮົມຢາພື້ນເມືອງ, ແຊ່ນ້ຳບໍ່ນ້ຳອຸ່ນ, ອາບແດດ ແລະ ອື່ນໆ ຕາມຄວາມເໝາະສົມ.

ການສົ່ງເສີມສຸຂະພາບ ອາດຈະຈັດຂຶ້ນຢູ່ສະຖານທີ່ພັກແຮມ ຫຼື ຢູ່ສະຖານທີ່ສະເພາະ.

**ມາດຕາ 39 (ໃໝ່) ການບໍລິການສົ່ງເສີມສຸຂະພາບ**

ການບໍລິການສົ່ງເສີມສຸຂະພາບ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະອາດ, ຄວາມສະດວກສະບາຍ ແລະ ໄດ້ຮັບຄວາມຜ່ອນຄາຍໃຫ້ແກ່ຜູ້ໃຊ້ບໍລິການ.

ຜູ້ໃຫ້ບໍລິການສົ່ງເສີມສຸຂະພາບ ຕ້ອງໄດ້ຮັບການຝຶກອົບຮົມວິຊາສະເພາະດ້ານການບໍລິການສົ່ງເສີມສຸຂະພາບເປັນຢ່າງດີ, ມີໃບຢັ້ງຢືນ, ມີມະນຸດສຳພັນດີ, ນຸ່ງຖືສຸພາບຮຽບຮ້ອຍ, ສັດຊື່, ຍິ້ມແຍ້ມແຈ່ມໃສ ແລະ ມີສຸຂະພາບແຂງແຮງດີ.

## ໝວດທີ 7
## ເຄື່ອງທີ່ລະນຶກ

**ມາດຕາ 40 ຄວາມສຳຄັນຂອງເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ເປັນສິ່ງໜຶ່ງທີ່ສ້າງຄວາມຊົງຈຳອັນດີໃຫ້ແກ່ນັກທ່ອງທ່ຽວ ຕໍ່ສິນລະປະ, ວັດທະນະທຳ, ປະຫວັດສາດ ແລະ ຮີດຄອງປະເພນີຂອງລາວ, ສະແດງໃຫ້ເຫັນເຖິງຄວາມປານີດ, ຄວາມສວຍງາມ ແລະ ສີມືຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 41 ປະເພດເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກມີຫຼາຍປະເພດ ເຊັ່ນ ເຄື່ອງປະດັບເງິນຄຳ, ເຄື່ອງຈັກສານ, ແຜ່ນແພ ລາຍຈົກ, ມັດໝີ່, ຖັກແສ່ວ, ເຄື່ອງເອ້, ເຄື່ອງແກະສະຫຼັກ, ຮູບແຕ້ມ, ເຄື່ອງປັ້ນດິນເຜົາ, ເຄື່ອງດົນຕີ ແລະ ອື່ນໆ ທີ່ມີຄວາມປານີດ ຊຶ່ງສ່ອງແສງ ເຖິງຮີດຄອງປະເພນີ, ວັດທະນະທຳອັນດີງາມ ແລະ ວິຖີຊີວິດຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 42 ສະຖານທີ່ຈັດວາງ ແລະ ຂາຍເຄື່ອງທີ່ລະນຶກ**

ເຄື່ອງທີ່ລະນຶກ ໃຫ້ຈັດວາງ ແລະ ຂາຍໃນສະຖານທີ່ພັກແຮມ, ຕະຫຼາດ, ຮ້ານຄ້າຊຸມຊົນ ບ່ອນນັກທ່ອງທ່ຽວໄປມາ ທີ່ມີການຕົບແຕ່ງຢ່າງເໝາະສົມ, ມີຄວາມສະອາດງາມຕາ.

ເຄື່ອງທີ່ລະນຶກ ຕ້ອງແມ່ນຜະລິດຕະພັນພາຍໃນເປັນສ່ວນຫຼາຍ.

## ໝວດທີ 8
## ຄວາມປອດໄພ

**ມາດຕາ 43 (ປັບປຸງ) ການຮັບປະກັນຄວາມປອດໄພ**

ການບໍລິການທ່ອງທ່ຽວ ຕ້ອງຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ ແລະ ຊັບສິນຂອງນັກທ່ອງທ່ຽວ. ຜູ້ບໍລິການທ່ອງທ່ຽວ ຕ້ອງມີວິທີການ ແລະ ມາດຕະຖານເຕັກນິກ ກ່ຽວກັບຄວາມປອດໄພ ໂດຍສອດຄ່ອງກັບລະບຽບກົດໝາຍຂະແໜງການທີ່ກ່ຽວຂ້ອງ.

ໃນກໍລະນີທີ່ເກີດເຫດການສຸກເສີນ ຜູ້ບໍລິການທ່ອງທ່ຽວ ຫຼື ຜູ້ທີ່ຮູ້ເຫັນເຫດການ ຕ້ອງໃຫ້ຄວາມຊ່ວຍເຫຼືອແກ່ນັກທ່ອງທ່ຽວ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢ່າງທັນການ.

**ມາດຕາ 44 (ໃໝ່) ຕຳຫຼວດທ່ອງທ່ຽວ**

ຕຳຫຼວດທ່ອງທ່ຽວ ແລະ ໜ່ວຍງານຊ່ວຍເຫຼືອສຸກເສີນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອອຳນວຍຄວາມສະດວກ, ຊ່ວຍເຫຼືອນັກທ່ອງທ່ຽວ ແລະ ຜູ້ປະກອບການທຸລະກິດທ່ອງທ່ຽວ.

ສິດ ແລະ ໜ້າທີ່ຂອງຕຳຫຼວດທ່ອງທ່ຽວ ແລະ ໜ່ວຍງານຊ່ວຍເຫຼືອສຸກເສີນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 45 (ປັບປຸງ) ການປະກັນໄພ**

ເພື່ອຮັບປະກັນການໃຊ້ແທນຄ່າເສັຍຫາຍຂອງນັກທ່ອງທ່ຽວທີ່ອາດຈະເກີດຂຶ້ນນັ້ນ ຜູ້ປະກອບການການທ່ອງທ່ຽວ ຕ້ອງມີປະກັນໄພຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການປະກັນໄພແຫ່ງ ສປປ ລາວ.

## ໝວດທີ 9
## ການບໍລິການນຳທ່ຽວ

**ມາດຕາ 46 ປະເພດການບໍລິການນຳທ່ຽວ**

ການບໍລິການນຳທ່ຽວ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ການນຳທ່ຽວລະຫວ່າງປະເທດ;
2. ການນຳທ່ຽວພາຍໃນປະເທດ;
3. ການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 47 ການບໍລິການນຳທ່ຽວລະຫວ່າງປະເທດ**

ການບໍລິການນຳທ່ຽວລະຫວ່າງປະເທດ ແມ່ນ ການບໍລິການນຳນັກທ່ອງທ່ຽວເຂົ້າມາພາຍໃນປະເທດ ຫຼື ນຳນັກທ່ອງທ່ຽວອອກຕ່າງປະເທດ ເພື່ອຈຸດປະສົງທ່ອງທ່ຽວ.

**ມາດຕາ 48 (ປັບປຸງ) ການບໍລິການນຳທ່ຽວພາຍໃນປະເທດ**

ການບໍລິການນຳທ່ຽວພາຍໃນປະເທດ ແມ່ນ ການບໍລິການນຳນັກທ່ອງທ່ຽວ ຢູ່ ສປປ ລາວ ທ່ຽວຊົມສະຖານທີ່ຕ່າງໆ ພາຍໃນປະເທດ.

**ມາດຕາ 49 ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ**

ການບໍລິການນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ແມ່ນ ການບໍລິການນຳນັກທ່ອງທ່ຽວທ່ຽວຊົມໃນສະຖານທີ່ທ່ອງທ່ຽວໃດໜຶ່ງຂອງ ສປປ ລາວ.

**ມາດຕາ 50 ການຈັດການບໍລິການນຳທ່ຽວ**

ການຈັດການບໍລິການນຳທ່ຽວ ຕ້ອງດຳເນີນໄປຕາມແຜນການ, ລາຍການ, ຕາຕະລາງເວລາ, ມາດຕະຖານ ແລະ ຄຸນນະພາບການນຳທ່ຽວ ທີ່ໄດ້ກຳນົດໄວ້.

**ມາດຕາ 51 ຄ່າບໍລິການນຳທ່ຽວ**

ຄ່າບໍລິການນຳທ່ຽວ ຕ້ອງສົມເຫດສົມຜົນກັບລາຍການ, ຕາຕະລາງເວລາ, ມາດຕະຖານ ແລະ ຄຸນນະພາບການນຳທ່ຽວ.

ການປ່ຽນແປງລາຄາ ຫຼື ລາຍການນຳທ່ຽວ ທີ່ໄດ້ຕົກລົງກັນ ແລ້ວດ້ວຍເຫດຜົນໃດໜຶ່ງ ຕ້ອງໄດ້ຮັບການເຫັນດີຈາກນັກທ່ອງທ່ຽວ.

## ໝວດທີ 10
## ພະນັກງານນຳທ່ຽວ

**ມາດຕາ 52 ປະເພດ ແລະ ລະດັບພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ປະກອບດ້ວຍ ສອງ ປະເພດ ຄື ພະນັກງານນຳທ່ຽວ ທີ່ສັງກັດບໍລິສັດທ່ອງທ່ຽວ ແລະ ພະນັກງານນຳທ່ຽວທີ່ບໍ່ສັງກັດບໍລິສັດທ່ອງທ່ຽວ.

ພະນັກງານນຳທ່ຽວທັງສອງປະເພດດັ່ງກ່າວ ປະກອບດ້ວຍ ສາມລະດັບ ຄື ພະນັກງານນຳທ່ຽວລະດັບຊາດ, ພະນັກງານນຳທ່ຽວລະດັບແຂວງ ແລະ ພະນັກງານນຳທ່ຽວລະດັບພື້ນທີ່ສະເພາະໃດໜຶ່ງ.

**ມາດຕາ 53 (ປັບປຸງ) ມາດຕະຖານພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ຕ້ອງມີມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ, ມີອາຍຸແຕ່ 18 ປີຂຶ້ນໄປ, ມີພູມລຳເນົາຢູ່ ສປປ ລາວ;
2. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ;
3. ມີບັດພະນັກງານນຳທ່ຽວ ອອກໃຫ້ໂດຍການຈັດຕັ້ງທີ່ກ່ຽວຂ້ອງ;
4. ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນການຝຶກອົບຮົມດ້ານການນຳທ່ຽວ ຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ທາງການຮັບຮູ້ຢ່າງຖືກຕ້ອງ;
5. ມີຄວາມຮູ້ຄວາມສາມາດສະເພາະດ້ານ ເປັນຕົ້ນ ພູມສາດ, ປະຫວັດສາດ, ພາສາຕ່າງປະເທດ ແລະ ການປະຖົມພະຍາບານຂັ້ນພື້ນຖານ;
6. ມີຄຸນທາດການເມືອງ, ມີຄຸນສົມບັດດີ, ສັດຊື່, ມະນຸດສຳພັນດີ, ມາລະຍາດດີ, ສຸພາບຮຽບຮ້ອຍ;
7. ມີສຸຂະພາບແຂງແຮງດີ ແລະ ບໍ່ມີພະຍາດຕິດຕໍ່ຮ້າຍແຮງ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານນຳທ່ຽວ**

ພະນັກງານນຳທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພານັກທ່ອງທ່ຽວ ທ່ຽວຊົມ ຕາມສະຖານທີ່ທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປີດໃຫ້ການບໍລິການຢ່າງຖືກຕ້ອງ;
2. ຮັບປະກັນຄວາມປອດໄພ, ອຳນວຍຄວາມສະດວກ ແລະ ໃຫ້ການຊ່ວຍເຫຼືອແກ່ນັກທ່ອງທ່ຽວໃນກໍລະນີຈຳເປັນ;
3. ເຄົາລົບນັບຖືຜູ້ໃຊ້ບໍລິການ, ລະບຽບກົດໝາຍ ແລະ ຮີດຄອງປະເພນີຂອງທ້ອງຖິ່ນບ່ອນທ່ຽວຊົມ;
4. ຊີ້ແຈງ, ອະທິບາຍປະຫວັດຄວາມເປັນມາ ຂອງສະຖານທີ່ທ່ອງທ່ຽວ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ IV
# ນັກທ່ອງທ່ຽວ ແລະ ການເຂົ້າ-ອອກເມືອງ
## ໝວດທີ 1
## ນັກທ່ອງທ່ຽວ

**ມາດຕາ 55 ປະເພດນັກທ່ອງທ່ຽວ**

ນັກທ່ອງທ່ຽວ ແບ່ງອອກເປັນ ສອງ ປະເພດ ຄື:

1. ນັກທ່ອງທ່ຽວພາຍໃນ;
2. ນັກທ່ອງທ່ຽວສາກົນ.

ມາດຕາ 56 ນັກທ່ອງທ່ຽວພາຍໃນ

ນັກທ່ອງທ່ຽວພາຍໃນ ແມ່ນ ນັກທ່ອງທ່ຽວທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຄົນຕ່າງປະເທດ ທີ່ ຢູ່ ສປປ ລາວ ຊຶ່ງເດີນທາງໄປທ່ອງທ່ຽວພາຍໃນປະເທດ.

ມາດຕາ 57 ນັກທ່ອງທ່ຽວສາກົນ

ນັກທ່ອງທ່ຽວສາກົນ ແມ່ນ ນັກທ່ອງທ່ຽວທີ່ເປັນຄົນຕ່າງປະເທດ, ພົນລະເມືອງລາວ ຢູ່ ຕ່າງປະເທດເດີນທາງເຂົ້າມາທ່ຽວ ຢູ່ ສປປ ລາວ ຫຼື ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດທີ່ອາໄສ ຢູ່ ສປປ ລາວ ຊຶ່ງເດີນທາງໄປທ່ອງທ່ຽວຕ່າງປະເທດ.

ມາດຕາ 58 (ປັບປຸງ) ສິດ ແລະ ພັນທະຂອງນັກທ່ອງທ່ຽວ

ນັກທ່ອງທ່ຽວ ມີ ສິດຕົ້ນຕໍ ດັ່ງນີ້:

1. ທ່ອງທ່ຽວ ໂດຍຜ່ານການບໍລິການ ຂອງບໍລິສັດທ່ອງທ່ຽວໃດໜຶ່ງ ຫຼື ທ່ອງທ່ຽວ ດ້ວຍຕົນເອງ;
2. ເລືອກການບໍລິການຄົບວົງຈອນ ຫຼື ສ່ວນໃດສ່ວນໜຶ່ງ ຈາກບໍລິສັດທ່ອງທ່ຽວ;
3. ໄດ້ຮັບຄວາມສະດວກໃນການເຂົ້າ-ອອກປະເທດ, ການເດີນທາງທ່ອງທ່ຽວ;
4. ໄດ້ຮັບອະນຸຍາດ ແລະ ຍົກເວັ້ນພາສີຕໍ່ສິ່ງຂອງຕິດຕົວທີ່ນໍາເຂົ້າ ແລະ ນໍາອອກ ສປປ ລາວ ຕາມລະບຽບກົດໝາຍ;
5. ຮ້ອງທຸກຕໍ່ການກະທໍາທີ່ບໍ່ຖືກຕ້ອງ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ຕົນ.

ນັກທ່ອງທ່ຽວ ມີ ພັນທະຕົ້ນຕໍ ດັ່ງນີ້:

1. ປະຕິບັດລະບຽບກົດໝາຍ, ນັບຖືຮີດຄອງປະເພນີອັນດີງາມຂອງລາວ;
2. ປະຕິບັດຕາມແຜນການ, ຕາຕະລາງເວລາ ກ່ຽວກັບການທ່ອງທ່ຽວ ຢ່າງເຂັ້ມງວດ;
3. ປົກປັກຮັກສາຊັບພະຍາກອນທ່ອງທ່ຽວ, ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ;
4. ລາຍງານໃຫ້ເຈົ້າໜ້າທີ່ ເມື່ອພົບເຫັນປາກົດການຫຍໍ້ທໍ້ ຊຶ່ງອາດມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 2
## ການເຂົ້າ-ອອກປະເທດຂອງນັກທ່ອງທ່ຽວ

ມາດຕາ 59 (ປັບປຸງ) ການອະນຸຍາດເຂົ້າ-ອອກປະເທດ

ນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວໃນ ສປປ ລາວ ຕ້ອງປະຕິບັດຕາມລະບຽບການເຂົ້າ-ອອກ ສປປ ລາວ ຢ່າງເຂັ້ມງວດ.

ເຈົ້າໜ້າທີ່ຮັບຜິດຊອບທີ່ກ່ຽວຂ້ອງ ຕ້ອງ ອໍານວຍຄວາມສະດວກ, ບໍລິການຢ່າງກະທັດຮັດ ແລະ ວ່ອງໄວ ໃນການອະນຸຍາດເຂົ້າ-ອອກປະເທດ ໃຫ້ແກ່ນັກທ່ອງທ່ຽວ.

**ມາດຕາ 60 (ປັບປຸງ) ດ່ານເຂົ້າ-ອອກ ປະເທດ**

ນັກທ່ອງທ່ຽວທີ່ເຂົ້າມາທ່ຽວ ສປປ ລາວ ຕ້ອງເຂົ້າ ແລະ ອອກຕາມດ່ານ ທີ່ໄດ້ກໍານົດໄວ້ ແລະ ປະຕິບັດຕາມລະບຽບການເຂົ້າ-ອອກໃຫ້ຖືກຕ້ອງ.

ເຈົ້າໜ້າທີ່ຮັບຜິດຊອບຢູ່ຕາມດ່ານ ຕ້ອງຄຸ້ມຄອງ ກວດກາ, ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ຈັດສັນສະຖານທີ່ໃຫ້ເໝາະສົມ ເພື່ອອໍານວຍຄວາມສະດວກ, ບໍລິການວ່ອງໄວ, ຮັບໃຊ້ດ້ວຍອັດທະຍາໄສໄມຕີອັນດີໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າ ແລະ ອອກປະເທດ.

**ມາດຕາ 61 (ປັບປຸງ) ການເດີນທາງພາຍໃນປະເທດ**

ນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ອງທ່ຽວໃນ ສປປ ລາວ ສາມາດເດີນທາງໄປທ່ອງທ່ຽວ ຢູ່ສະຖານທີ່ທ່ອງທ່ຽວແຫ່ງຕ່າງໆ ພາຍໃນປະເທດໄດ້ ຕາມລະບຽບການ.

ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງອໍານວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວຢູ່ພາຍໃນປະເທດ, ປັບປຸງແກ້ໄຂລະບຽບການທີ່ບໍ່ສອດຄ່ອງ ຊຶ່ງສ້າງຄວາມຫຍຸ້ງຍາກ ໃຫ້ແກ່ນັກທ່ອງທ່ຽວໃນການເດີນທາງ ແລະ ທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ.

# ພາກທີ V
# ການພັດທະນາການທ່ອງທ່ຽວ
## ໝວດທີ 1
## ການວາງແຜນພັດທະນາການທ່ອງທ່ຽວ

**ມາດຕາ 62 ລະດັບແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວ ມີແຜນໄລຍະຍາວ, ກາງ ແລະ ສັ້ນ ຊຶ່ງຈັດລະດັບ ດັ່ງນີ້:

1. ແຜນຍຸດທະສາດພັດທະນາການທ່ອງທ່ຽວແຫ່ງຊາດ;
2. ແຜນພັດທະນາການທ່ອງທ່ຽວລະດັບພາກ;
3. ແຜນພັດທະນາການທ່ອງທ່ຽວລະດັບແຂວງ;
4. ແຜນພັດທະການທ່ອງທ່ຽວລະດັບເມືອງ;
5. ແຜນພັດທະນາແຫຼ່ງທ່ອງທ່ຽວ;

**ມາດຕາ 63 (ປັບປຸງ) ຫຼັກການໃນການວາງແຜນ**

ການວາງແຜນພັດທະນາການທ່ອງທ່ຽວ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ອີງໃສ່ທ່າແຮງບົ່ມຊ້ອນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ;

2. ດໍາເນີນຕາມທິດການທ່ອງທ່ຽວທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ໂດຍມີສ່ວນຮ່ວມຂອງຊຸມຊົນ;

3. ຮັບປະກັນລັກສະນະຍືນຍົງຕິດພັນກັບການປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງລາວ;

4. ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ;

5. ສົ່ງເສີມການທ່ອງທ່ຽວພາຍໃນໄປຄຽງຄູ່ກັບການທ່ອງທ່ຽວສາກົນ;

6. ເລັ່ງໃສ່ເຂດເປົ້າໝາຍທີ່ໂດດເດັ່ນ ລວມທັງການສ້າງຜະລິດຕະພັນທ່ອງທ່ຽວໃໝ່ ທີ່ມີຄວາມສາມາດແຂ່ງຂັນໃນຂົງເຂດ ແລະ ໃນໂລກ.

7. ພັດທະນາ, ສ້າງສິ່ງອຳນວຍຄວາມສະດວກ ແລະ ບຸກຄະລາກອນດ້ານການທ່ອງທ່ຽວ.

**ມາດຕາ 64 ເນື້ອໃນການວາງແຜນພັດທະນາການທ່ອງທ່ຽວ**

ແຜນພັດທະນາການທ່ອງທ່ຽວ ຕ້ອງ ກຳນົດເນື້ອໃນຕົ້ນຕໍ, ຈຸດປະສົງ, ຄາດໝາຍ, ເປົ້າໝາຍພັດທະນາ, ປະເມີນ ແລະ ວິເຄາະທ່າແຮງບົ່ມຊ້ອນ, ສະພາບການຕະຫຼາດທ່ອງທ່ຽວ, ຜົນໄດ້ຮັບ, ຜົນກະທົບຕໍ່ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ ພ້ອມທັງກຳນົດວິທີການ, ລະບຽບການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ.

## ໝວດທີ 2
## ການພັດທະນາແຫຼ່ງທ່ອງທ່ຽວ

**ມາດຕາ 65 ຂັ້ນຕອນການພັດທະນາແຫຼ່ງທ່ອງທ່ຽວ**

ຂັ້ນຕອນການພັດທະນາແຫຼ່ງທ່ອງທ່ຽວ ປະກອບດ້ວຍ ການສຳຫຼວດ, ວາງແຜນ, ແບ່ງເຂດ, ຈັດສັນ, ອອກແບບ, ລົງທຶນສ້າງ ແລະ ຮຽບຮຽງປະຫວັດແຫຼ່ງທ່ອງທ່ຽວ.

**ມາດຕາ 66 ການແບ່ງເຂດພັດທະນາແຫຼ່ງທ່ອງທ່ຽວ**

ການແບ່ງເຂດພັດທະນາແຫຼ່ງທ່ອງທ່ຽວ ຕ້ອງອີງໃສ່ທ່າແຮງຂອງຊັບພະຍາກອນການທ່ອງທ່ຽວ ແລະ ເງື່ອນໄຂເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວ.

ການພັດທະນາແຫຼ່ງທ່ອງທ່ຽວ ແບ່ງເປັນສາມເຂດ ຄື ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ.

**ມາດຕາ 67 (ໃໝ່) ເຂດອະນຸລັກ**

ເຂດອະນຸລັກ ແມ່ນ ເຂດທີ່ທາງການບໍ່ອະນຸຍາດໃຫ້ມີການທຳລາຍ, ປຸກສ້າງ, ດັດແປງ, ຕໍ່ເຕີມ, ບຸກເບີກ ແລະ ອື່ນໆ ທີ່ຜິດຜ່ຽນໄປຈາກສະພາບເດີມ ຢູ່ພາຍໃນຂອບເຂດບໍລິເວນພື້ນທີ່ອະນຸລັກ, ມີພຽງແຕ່ບູລະນະ ຫຼື ປະຕິສັງຂອນໃຫ້ຢູ່ໃນສະພາບເດີມ.

**ມາດຕາ 68 (ໃໝ່) ເຂດສະຫງວນ**

ເຂດສະຫງວນ ແມ່ນ ເຂດພື້ນທີ່ທາງການໄດ້ກຳນົດຂຶ້ນສຳລັບການພັດທະນາກິດຈະການໃດໜຶ່ງ ເພື່ອຜົນປະໂຫຍດລວມ ແລະ ຮັບໃຊ້ສາທາລະນະ ດ້ານການທ່ອງທ່ຽວ ເປັນຕົ້ນ ຈຸດຊົມວິວ, ບ່ອນຕັ້ງຄ້າຍພັກແຮມ, ຈຸດແວ່ເຊົາຂອງນັກທ່ອງທ່ຽວ, ເສັ້ນທາງຍ່າງ.

ການກຳນົດເຂດສະຫງວນ ຕ້ອງໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ຮັບການຢັ້ງຢືນຢ່າງຖືກຕ້ອງ.

**ມາດຕາ 69 (ໃໝ່) ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ**

ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ ແມ່ນ ເຂດພື້ນທີ່ ທີ່ທາງການກຳນົດຂຶ້ນ ເພື່ອສ້າງສິ່ງອຳນວຍຄວາມສະດວກໃນດ້ານຕ່າງໆຢ່າງເປັນລະບົບ ຊຶ່ງສາມາດພັດທະນາກິດຈະການຮອງຮັບການທ່ອງທ່ຽວ ເຊັ່ນ ກິດຈະການທ່ອງທ່ຽວ, ກິດຈະການພັກແຮມ, ກິດຈະການອາຫານ, ການຄ້າ, ການບໍລິການອື່ນໆ.

**ມາດຕາ 70 ລະບຽບການຄຸ້ມຄອງແຫຼ່ງທ່ອງທ່ຽວ**

ລະບຽບການຄຸ້ມຄອງແຫຼ່ງທ່ອງທ່ຽວ ປະກອບດ້ວຍ ສອງປະເພດ ຄື ລະບຽບການຄຸ້ມຄອງລວມ ແລະ ລະບຽບການຄຸ້ມຄອງສະເພາະ.

ລະບຽບການຄຸ້ມຄອງລວມ ມີເນື້ອໃນຕົ້ນຕໍກ່ຽວກັບການອະນຸລັກ, ການປົກປັກຮັກສາແຫຼ່ງທ່ອງທ່ຽວ, ສິ່ງແວດລ້ອມ, ການປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ການນຳໃຊ້ທີ່ດິນ ແລະ ການປຸກສ້າງ.

ລະບຽບການຄຸ້ມຄອງສະເພາະ ມີເນື້ອໃນກ່ຽວກັບແຕ່ລະແຫຼ່ງທ່ອງທ່ຽວ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບການຄຸ້ມຄອງລວມ.

## ໝວດທີ 3
## ເມືອງທ່ອງທ່ຽວ

**ມາດຕາ 71 ເງື່ອນໄຂທີ່ເປັນເມືອງທ່ອງທ່ຽວ**

ເງື່ອນໄຂທີ່ເປັນເມືອງທ່ອງທ່ຽວ ມີ ດັ່ງນີ້:

1. ເປັນເມືອງທີ່ຄົນນິຍົມໄປທ່ຽວຊົມຢ່າງຫຼວງຫຼາຍ;
2. ມີຊັບພະຍາກອນທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ຫຼື ປະຫວັດສາດ ຢູ່ພາຍໃນ ຫຼື ບໍລິເວນນອກຕົວເມືອງ ທີ່ດຶງດູດນັກທ່ອງທ່ຽວ;
3. ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ ແລະ ຄວາມປອດໄພ;
4. ມີພື້ນຖານໂຄງລ່າງສະດວກໂດຍພື້ນຖານ ແລະ ສາມາດພັດທະນາໃນຂັ້ນຕໍ່ໄປ;

5. ຖືເອົາທຸລະກິດການທ່ອງທ່ຽວເປັນພາກສ່ວນສຳຄັນ ໃນໂຄງປະກອບເສດຖະກິດຂອງເມືອງ ຊຶ່ງລາຍຮັບສ່ວນຫຼາຍໄດ້ມາຈາກການທ່ອງທ່ຽວ.

**ມາດຕາ 72 (ປັບປຸງ) ການພັດທະນາເມືອງທ່ອງທ່ຽວ**

ການພັດທະນາເສດຖະກິດ-ສັງຄົມຂອງເມືອງທ່ອງທ່ຽວ ຕ້ອງຖືເອົາການທ່ອງທ່ຽວ ເປັນບູລິມະສິດອັນດັບໜຶ່ງ.

ການພັດທະນາເມືອງທ່ອງທ່ຽວ ຕ້ອງ ເລັ່ງໃສ່ການສົ່ງເສີມການລົງທຶນ, ສ້າງພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ, ພັດທະນາຊັບພະຍາກອນມະນຸດ, ສ້າງຈິດສຳນຶກກ່ຽວກັບການທ່ອງທ່ຽວໃຫ້ພົນລະເມືອງ ແລະ ການນຳໃຊ້ທີ່ດິນ, ພັດທະນາຕົວເມືອງໃຫ້ມີຄວາມສະອາດ, ສວຍງາມ, ເປັນລະບຽບຮຽບຮ້ອຍ ເພື່ອດຶງດູດນັກທ່ອງທ່ຽວ.

**ມາດຕາ 73 (ປັບປຸງ) ການຄຸ້ມຄອງເມືອງທ່ອງທ່ຽວ**

ເມືອງທ່ອງທ່ຽວ ຕ້ອງມີລະບຽບການຄຸ້ມຄອງສະເພາະ ເພື່ອປົກປັກຮັກສາ, ອະນຸລັກ ແລະ ພັດທະນາຊັບພະຍາກອນທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ.

## ໝວດທີ 4
## ກອງທຶນການທ່ອງທ່ຽວ

**ມາດຕາ 74 (ປັບປຸງ) ຈຸດປະສົງຂອງກອງທຶນການທ່ອງທ່ຽວ**

ກອງທຶນການທ່ອງທ່ຽວ ສ້າງຂຶ້ນເພື່ອພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວ ເຊັ່ນ ພັດທະນາຊັບພະຍາກອນມະນຸດ, ພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ, ໂຄສະນາສົ່ງເສີມການຕະຫຼາດທ່ອງທ່ຽວ, ກຳນົດມາດຕະຖານການທ່ອງທ່ຽວ ແລະ ລະບຽບການຄຸ້ມຄອງການທ່ອງທ່ຽວ.

**ມາດຕາ 75 (ປັບປຸງ) ແຫຼ່ງກອງທຶນ**

ກອງທຶນການທ່ອງທ່ຽວໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ການເຄື່ອນໄຫວກິດຈະກຳກ່ຽວກັບການທ່ອງທ່ຽວ ເຊັ່ນ ເທສະການອາຫານ, ງານວາງສະແດງການທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ;
4. ລາຍໄດ້ອື່ນ ທີ່ຖືກກົດໝາຍ.

**ມາດຕາ 76 (ປັບປຸງ) ການນຳໃຊ້ ແລະ ການຄຸ້ມຄອງກອງທຶນການທ່ອງທ່ຽວ**

ການນຳໃຊ້ກອງທຶນການທ່ອງທ່ຽວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້.

ການຄຸ້ມຄອງກອງທຶນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VI
## ທຸລະກິດການທ່ອງທ່ຽວ

**ມາດຕາ 77 ກິດຈະການທຸລະກິດການທ່ອງທ່ຽວ**

ກິດຈະການທຸລະກິດການທ່ອງທ່ຽວ ປະກອບດ້ວຍ:

1. ທຸລະກິດແຫຼ່ງທ່ອງທ່ຽວ;
2. ທຸລະກິດນຳທ່ຽວ;
3. ທຸລະກິດຂົນສົ່ງນັກທ່ອງທ່ຽວ;
4. ທຸລະກິດພັກແຮມ;
5. ທຸລະກິດພັດຕາຄານ, ຮ້ານອາຫານ;
6. ທຸລະກິດຝຶກອົບຮົມການທ່ອງທ່ຽວ;
7. ທຸລະກິດທີ່ປຶກສາການທ່ອງທ່ຽວ;
8. ທຸລະກິດສະຖານບັນເທີງ;
9. ທຸລະກິດເຄື່ອງທີ່ລະນຶກ ແລະ ອື່ນໆ.

**ມາດຕາ 78 (ປັບປຸງ) ການສ້າງຕັ້ງ ແລະ ດຳເນີນກິດຈະການທຸລະກິດການທ່ອງທ່ຽວ**

ບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ຈະສ້າງຕັ້ງວິສາຫະກິດ ເພື່ອດຳເນີນກິດຈະການທຸລະກິດການທ່ອງທ່ຽວ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ມີເງື່ອນໄຂ ດັ່ງນີ້:

ກ. ບຸກຄົນ

1. ມີອາຍຸແຕ່ 18 ປີ ຂຶ້ນໄປ;
2. ບໍ່ເປັນບ້າເສັຍຈິດ;
3. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ;

ຂ. ນິຕິບຸກຄົນ

1. ມີທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ;
2. ປະຕິບັດພັນທະຕໍ່ລັດຕາມລະບຽບກົດໝາຍຢ່າງຖືກຕ້ອງ;
3. ບໍ່ຢູ່ໃນໄລຍະການປະຕິບັດຄຳຕັດສິນຂອງສານເປັນຜູ້ລົ້ມລະລາຍ.

ລັດ ສະຫງວນບາງກິດຈະການ ແລະ ບາງວິຊາຊີບ ໃຫ້ສະເພາະຄົນລາວ ເປັນຕົ້ນ ອາຊີບພະນັກງານນໍາທ່ຽວ, ທຸລະກິດນໍາທ່ຽວພາຍໃນປະເທດ, ທຸລະກິດນໍາທ່ຽວໃນພື້ນທີ່ສະເພາະໃດໜຶ່ງ, ເຮືອນພັກ, ຫ້ອງພັກ.

ຂະແໜງການທີ່ກ່ຽວຂ້ອງ ມີໜ້າທີ່ສົ່ງເສີມ, ອໍານວຍຄວາມສະດວກໃນການສ້າງຕັ້ງ ແລະ ດໍາເນີນກິດຈະການທຸລະກິດການທ່ອງທ່ຽວ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 79 (ປັບປຸງ) ສິດ ແລະ ພັນທະຂອງວິສາຫະກິດການທ່ອງທ່ຽວ**

ວິສາຫະກິດການທ່ອງທ່ຽວ ມີ ສິດຕົ້ນຕໍ ດັ່ງນີ້:

1. ເຄື່ອນໄຫວດໍາເນີນທຸລະກິດຂອງຕົນຢ່າງເສລີ ຖືກຕ້ອງຕາມກົດໝາຍ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ຕາມລະບຽບກົດໝາຍ;
3. ເຂົ້າຮ່ວມການເຄື່ອນໄຫວຂອງສະມາຄົມທຸລະກິດການທ່ອງທ່ຽວ;
4. ກໍານົດຄ່າບໍລິການທ່ອງທ່ຽວໂດຍສອດຄ່ອງກັບເງື່ອນໄຂ ແລະ ມາດຕະຖານ ທຸລະກິດຂອງຕົນ.

ວິສາຫະກິດການທ່ອງທ່ຽວ ມີ ພັນທະຕົ້ນຕໍ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
2. ປົກປັກຮັກສາສິ່ງແວດລ້ອມທໍາມະຊາດ, ຮີດຄອງປະເພນີອັນດີງາມຂອງຊາດ, ຄວາມສະອາດ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ຖືບັນຊີວິສາຫະກິດ ແລະ ປະຕິບັດພັນທະຕໍ່ລັດຢ່າງເຂັ້ມງວດ.

## ພາກທີ VII
## ສະມາຄົມທຸລະກິດການທ່ອງທ່ຽວ

**ມາດຕາ 80 (ໃໝ່) ການສ້າງຕັ້ງສະມາຄົມທຸລະກິດການທ່ອງທ່ຽວ**

ລັດ ອະນຸຍາດໃຫ້ສ້າງຕັ້ງສະມາຄົມທຸລະກິດການທ່ອງທ່ຽວ ເພື່ອສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວດໍາເນີນທຸລະກິດຢ່າງມີປະສິດທິຜົນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ບົນພື້ນຖານການປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 81 (ໃໝ່) ພາລະບົດບາດຂອງສະມາຄົມ**

ສະມາຄົມທຸລະກິດການທ່ອງທ່ຽວ ມີພາລະບົດບາດ ເຕົ້າໂຮມບັນດາຫົວໜ່ວຍວິສາຫະກິດການທ່ອງທ່ຽວ ທີ່ດໍາເນີນທຸລະກິດ ຢູ່ ສປປ ລາວ ທັງພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເປັນເຄືອຂ່າຍທີ່ເຂັ້ມແຂງ, ມີກໍາລັງແຮງໃນການປະກອບສ່ວນ ຊຸກຍູ້ສົ່ງເສີມ ແລະ ພັດທະນາການ

ທ່ອງທ່ຽວ ໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ແລະ ມີປະສິດທິຜົນສູງ, ສາມາດເຊື່ອມໂຍງເຂົ້າກັບການທ່ອງທ່ຽວອາຊຽນ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 82 (ໃໝ່) ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດການທ່ອງທ່ຽວ**

ສະມາຄົມທຸລະກິດການທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງກົດລະບຽບຂອງຕົນ, ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບວຽກງານທ່ອງທ່ຽວໃຫ້ສະມາຊິກຂອງຕົນ ແລະ ມວນຊົນ ເຊື່ອມຊຶມ, ຮັບຮູ້ຢ່າງກວ້າງຂວາງ, ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

2. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນໃຫ້ເຕີບໃຫຍ່ເຂັ້ມແຂງ, ນໍາໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນການເຄື່ອນໄຫວວຽກງານທ່ອງທ່ຽວ;

3. ຊຸກຍູ້ບັນດາຫົວໜ່ວຍວິສາຫະກິດການທ່ອງທ່ຽວ ເຂົ້າເປັນສະມາຊິກຂອງສະມາຄົມ, ຊ່ວຍເຫຼືອ ແລະ ສົ່ງເສີມສະມາຊິກໃນການປະກອບອາຊີບຂອງຕົນໃຫ້ຈະເລີນກ້າວໜ້າ, ຄຸ້ມຄອງ ແລະ ປົກປ້ອງຜົນປະໂຫຍດອັນຊອບທໍາຂອງສະມາຊິກ ບົນພື້ນຖານລະບຽບກົດໝາຍ;

4. ເປັນຕົວແທນໃຫ້ຜູ້ດໍາເນີນທຸລະກິດການທ່ອງທ່ຽວໃນການພົວພັນຮ່ວມມື, ເຂົ້າຮ່ວມກອງປະຊຸມ, ສະເໜີຄໍາເຫັນຕໍ່ຂະແໜງການທ່ອງທ່ຽວ ກ່ຽວກັບວຽກງານທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ;

5. ຕິດຕາມການເຄື່ອນໄຫວ, ໃຫ້ຄໍາແນະນໍາ ແລະ ແກ້ໄຂຂໍ້ຂັດແຍ່ງຂອງບັນດາສະມາຊິກໃນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະໜອງຂໍ້ມູນ ຂ່າວສານໃຫ້ສະມາຊິກຂອງຕົນ ກ່ຽວກັບການທ່ອງທ່ຽວ, ຕະຫຼາດການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;

7. ໃຫ້ການຮ່ວມມື, ປະສານສົມທົບກັບພາກລັດທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ແລກປ່ຽນຄໍາຄິດຄໍາເຫັນ ກ່ຽວກັບການພັດທະນາ, ການໂຄສະນາສົ່ງເສີມ ແລະ ການຄຸ້ມຄອງການທ່ອງທ່ຽວ;

8. ຈັດຕັ້ງ ເຜີຍແຜ່ແນວທາງ ນະໂຍບາຍ, ຝຶກອົບຮົມ ຍົກລະດັບທາງດ້ານວິຊາສະເພາະໃຫ້ແກ່ສະມາຊິກຂອງຕົນ;

9. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານຂອງຕົນ ລວມທັງຕົວເລກສະຖິຕິ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

# ພາກທີ VIII
# ຂໍ້ຫ້າມ

**ມາດຕາ 83 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດການທ່ອງທ່ຽວ**

ຫ້າມຜູ້ດຳເນີນທຸລະກິດການທ່ອງທ່ຽວ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດການທ່ອງທ່ຽວ ທີ່ແຕະຕ້ອງເຖິງອະທິປະໄຕ, ຄວາມໝັ້ນຄົງ, ຄວາມສະຫງົບຂອງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ສ້າງ ແລະ ປະຕິບັດໂຄງການທ່ອງທ່ຽວ ທີ່ບໍ່ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ ຫຼື ກໍ່ຄວາມເສັຍຫາຍແກ່ຊັບພະຍາກອນການທ່ອງທ່ຽວ, ສິ່ງແວດລ້ອມ ຫຼື ທັດສະນີຍະພາບ;

3. ສະແຫວງຫາຜົນປະໂຫຍດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຈາກນັກທ່ອງທ່ຽວ;

4. ດຳເນີນທຸລະກິດການທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ;

5. ດຳເນີນທຸລະກິດການທ່ອງທ່ຽວຜິດຕໍ່ລະບຽບກົດໝາຍ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ;

6. ຄ້າມະນຸດ, ໂສເພນີ, ຂູດຮີດທາງເພດ, ລ່ວງລະເມີດທາງເພດເດັກ, ຂູດຮີດແຮງງານ, ໃຊ້ແຮງງານເດັກ, ມົ້ວສຸມການພະນັນ, ມົ້ວສຸມທາງເພດ;

7. ຜະລິດ, ຄ້າຂາຍ, ເສບ, ມີໄວ້ໃນຄອບຄອງ ຫຼື ຈຳໜ່າຍສິ່ງເສບຕິດທຸກປະເພດ;

8. ໂອນ ຫຼື ໃຫ້ຜູ້ອື່ນເຊົ່າ ໃບທະບຽນທຸລະກິດການທ່ອງທ່ຽວ ໂດຍບໍ່ຖືກຕ້ອງ;

9. ໂຄສະນາບິດເບືອນຄວາມຈິງ, ໃສ່ຮ້າຍປ້າຍສີບຸກຄົນອື່ນ ຫຼື ການຈັດຕັ້ງ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 84 (ປັບປຸງ) ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ທຳລາຍຊັບພະຍາກອນທ່ອງທ່ຽວ, ຄວາມສວຍງາມຂອງສິ່ງແວດລ້ອມ, ຮີດຄອງປະເພນີອັນດີງາມຂອງຊາດ ທີ່ພົວພັນເຖິງການທ່ອງທ່ຽວ;

2. ສ້າງສິ່ງກີດຂວາງ, ສິ່ງສຽງລົບກວນ, ຈັດງານ, ຈັດກິດຈະກຳຕ່າງໆ, ສ້າງຄວາມເປື້ອນເປິະໃນສະຖານທີ່ທ່ອງທ່ຽວ ຫຼື ສະຖານທີ່ສາທາລະນະ ດ້ວຍຮູບແບບຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;

3. ບຸກລຸກ, ຈັບຈອງ ຫຼື ປຸກສ້າງຢູ່ໃນເຂດຫວງຫ້າມ ຫຼື ເຂດຊັບພະຍາກອນທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ;

4. ແຕ່ງກາຍ, ນຸ່ງຖື ແລະ ມີພຶດຕິກຳ ບໍ່ສຸພາບຮຽບຮ້ອຍ ຢູ່ ສະຖານທີ່ສັກສິດ, ວັດ, ສາສະໜາສະຖານ, ສະຖານທີ່ທ່ອງທ່ຽວປະຫວັດສາດ, ສະຖານບູຮານ ແລະ ສະຖານ ທີ່ອື່ນ;

5. ໂຄສະນາບິດເບືອນຄວາມຈິງ, ໃສ່ຮ້າຍປ້າຍສີບຸກຄົນອື່ນ ຫຼື ການຈັດຕັ້ງ;

6. ຄ້າມະນຸດ, ໂສເພນີ, ຂູດຮີດທາງເພດ, ລ່ວງລະເມີດທາງເພດເດັກ, ຂູດຮີດແຮງງານ, ໃຊ້ແຮງງານເດັກ, ມົ້ວສຸມການພະນັນ, ມົ້ວສຸມທາງເພດ;

7. ຜະລິດ, ຄ້າຂາຍ, ເສບ, ມີໄວ້ໃນຄອບຄອງ ຫຼື ຈຳໜ່າຍສິ່ງເສບຕິດທຸກປະເພດ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 85 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 86 (ໃໝ່) ການປະນີປະນອມ

ໃນກໍລະນີເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດກ່ຽວກັບການທ່ອງທ່ຽວ ຄູ່ກໍລະນີຕ້ອງປຶກສາຫາລື ເຈລະຈາທາທາງອອກຢ່າງສັນຕິວິທີ ແລະ ປະນີປະນອມກັນ.

### ມາດຕາ 87 (ໃໝ່) ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ກ່ຽວກັບການທ່ອງທ່ຽວ ຄູ່ກໍລະນີ ມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງບ່ອນທີ່ຕົນໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

### ມາດຕາ 88 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດ ກ່ຽວກັບການທ່ອງທ່ຽວ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

### ມາດຕາ 89 (ໃໝ່) ການຕັດສິນຂອງສານ

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນໃນການດຳເນີນທຸລະກິດກ່ຽວກັບການທ່ອງທ່ຽວ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມລະບຽບກົດໝາຍ.

ມາດຕາ 90 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ

ໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການດຳເນີນທຸລະກິດການທ່ອງທ່ຽວ ລະຫວ່າງຜູ້ດຳເນີນທຸລະກິດການທ່ອງທ່ຽວ ກັບ ຜູ້ໃຊ້ບໍລິການທ່ອງທ່ຽວ ຫຼື ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ ຫຼື ຕ່າງປະເທດ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດ ຕາມສົນທິສັນຍາ, ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ X
## ການຄຸ້ມຄອງ ແລະ ການກວດກາວຽກງານທ່ອງທ່ຽວ
### ໝວດທີ 1
### ອົງການຄຸ້ມຄອງ

ມາດຕາ 91(ປັບປຸງ) ອົງການຄຸ້ມຄອງວຽກງານທ່ອງທ່ຽວ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານທ່ອງທ່ຽວຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບ ໂດຍກົງ ທັງເປັນເຈົ້າການປະສານສົມທົບກັບກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທ່ອງທ່ຽວ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

ມາດຕາ 92 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ ໂຄງການ ເພື່ອໂຄສະນາ ເຜີຍແຜ່ ແລ້ວຈັດຕັ້ງປະຕິບັດ;

3. ສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ກຳນົດແຜນປົກປັກຮັກສາ, ອະນຸລັກ, ບູລະນະ, ພັດທະນາ ແລະ ໂຄສະນາສົ່ງເສີມການທ່ອງທ່ຽວໃນຂອບເຂດທົ່ວປະເທດ;

4. ກຳນົດມາດຕະຖານ ແລະ ເງື່ອນໄຂກ່ຽວກັບການຈັດລະດັບຂັ້ນຂອງແຕ່ລະປະເພດທຸລະກິດການທ່ອງທ່ຽວ ເພື່ອເຮັດໃຫ້ຫົວໜ່ວຍທຸລະກິດການທ່ອງທ່ຽວແຕ່ລະປະເພດ ມີຄຸນນະພາບ, ໄດ້ມາດຕະຖານສາກົນ, ມີການຈັດຕັ້ງ ການເຄື່ອນໄຫວ ຖືກຕ້ອງຕາມລະບຽບກົດໝາຍ;

5. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງ ການເຄື່ອນໄຫວ ແລະ ການປະຕິບັດນະໂຍບາຍ, ແຜນການ, ໂຄງການ, ລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວ ຂອງຂະແໜງການທີ່ຂຶ້ນກັບຕົນ;

6. ຈັດຕັ້ງ ແລະ ສົ່ງເສີມການບຳລຸງ ສ້າງ, ຍົກລະດັບ, ຝຶກອົບຮົມບຸກຄະລາກອນ ຂອງພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວໃນວຽກງານທ່ອງທ່ຽວ ໃຫ້ມີຄວາມຮູ້ຄວາມສາມາດໃນລະດັບທີ່ແນ່ນອນກ່ຽວກັບການທ່ອງທ່ຽວ;

7. ປັບປຸງລະບົບການຈັດຕັ້ງຂອງຂະແໜງການທ່ອງທ່ຽວໃຫ້ມີຄວາມໜັກແໜ້ນ, ຄຸ້ມຄອງ ແລະ ນຳໃຊ້ພະນັກງານ, ລັດຖະກອນ ໂດຍຮັບປະກັນດ້ານປະລິມານ, ຄຸນນະພາບ ແລະ ປະສິດທິຜົນ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນແຕ່ລະໄລຍະ;

8. ຄຸ້ມຄອງ ແລະ ນຳໃຊ້ກອງທຶນການທ່ອງທ່ຽວ ຢ່າງມີແຜນການ, ມີປະສິດທິຜົນ, ສອດຄ່ອງກັບເປົ້າໝາຍ ແລະ ຈຸດປະສົງຂອງກອງທຶນ, ຫຼັກການ ແລະ ລະບຽບການຂອງກະຊວງການເງິນ;

9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທ່ອງທ່ຽວ ເປັນຕົ້ນ ການສຳຫຼວດ, ການເກັບກຳຂໍ້ມູນ, ການຄົ້ນຄວ້າ, ຈັດສັນແຫຼ່ງທ່ອງທ່ຽວ ແລະ ອະນຸມັດການດຳເນີນທຸລະກິດທ່ອງທ່ຽວ, ອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ;

10. ພິຈາລະນາ ອອກອະນຸຍາດ, ຍ້ອງຍໍ, ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫຼື ຍຸບເລີກກິດຈະການທຸລະກິດການທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

11. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທ່ອງທ່ຽວ;

12. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ກ່ຽວກັບວຽກງານທ່ອງທ່ຽວໃຫ້ແກ່ລັດຖະບານ ຢ່າງເປັນປົກກະຕິ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 93 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ໂຄງການ ກ່ຽວກັບການພັດທະນາການທ່ອງທ່ຽວ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ປະຕິບັດແຜນການ, ລະບຽບກົດໝາຍ ແລະ ຄຳສັ່ງ ກ່ຽວກັບວຽກງານທ່ອງທ່ຽວ;

3. ເປັນເຈົ້າການປະສານງານກັບພາກສ່ວນອື່ນທີ່ກ່ຽວຂ້ອງ, ລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ;

4. ຄົ້ນຄວ້າພິຈາລະນາ ອະນຸຍາດ, ຍົກເລີກກິດຈະການທຸລະກິດການທ່ອງທ່ຽວ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

5. ພິຈາລະນາ ອອກອະນຸຍາດ, ຍ້ອງຍໍ, ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫຼື ຍຸບເລີກກິດຈະການທຸລະກິດການທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ບຳລຸງ ສ້າງ, ຈັດຕັ້ງຝຶກອົບຮົມບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ;

7. ຄຸ້ມຄອງ ແລະ ນຳໃຊ້ກອງທຶນການທ່ອງທ່ຽວ ຢ່າງມີແຜນການ, ມີປະສິດທິຜົນ, ສອດຄ່ອງກັບເປົ້າໝາຍ ແລະ ຈຸດປະສົງຂອງກອງທຶນ, ຫຼັກການ, ລະບຽບການຂອງກະຊວງການເງິນ;

8. ພົວພັນກັບຕ່າງປະເທດ ກ່ຽວກັບວຽກງານທ່ອງທ່ຽວ ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ກ່ຽວກັບວຽກງານທ່ອງທ່ຽວໃຫ້ແກ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທອງທ່ຽວ, ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ໂຄງການ ກ່ຽວກັບການພັດທະນາການທ່ອງທ່ຽວ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ປະຕິບັດແຜນການ, ລະບຽບກົດໝາຍ ແລະ ຄຳສັ່ງ ກ່ຽວກັບວຽກງານທ່ອງທ່ຽວ;

3. ເປັນເຈົ້າການ ປະສານງານກັບພາກສ່ວນອື່ນທີ່ກ່ຽວຂ້ອງ, ລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ;

4. ຄົ້ນຄວ້າພິຈາລະນາ ອະນຸຍາດ, ຍົກເລີກກິດຈະການທຸລະກິດການທ່ອງທ່ຽວ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

5. ພິຈາລະນາ ອອກອະນຸຍາດ, ຍ້ອງຍໍ, ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫຼື ຍຸບເລີກກິດຈະການທຸລະກິດການທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ສະເໜີ ບຳລຸງ ສ້າງ, ຈັດຕັ້ງຝຶກອົບຮົມບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ;

7. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ກ່ຽວກັບວຽກງານທ່ອງທ່ຽວໃຫ້ແກ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 95 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ອົງການປົກຄອງບ້ານມີສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ ໃນການພັດທະນາ, ກວດກາ ແລະ ໂຄສະນາສົ່ງເສີມການທ່ອງທ່ຽວ ໃນຂອບເຂດບ້ານຂອງຕົນ.

ມາດຕາ 96 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ

ໃນການຄຸ້ມຄອງວຽກງານທ່ອງທ່ຽວ ຂະແໜງການອື່ນ ມີ ສິດ ແລະ ໜ້າທີ່ ປົກປັກຮັກສາ, ພັດທະນາ ແລະ ໂຄສະນາສົ່ງເສີມການທ່ອງທ່ຽວ, ຊັບພະຍາກອນທ່ອງທ່ຽວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ອົງການກວດກາ

ມາດຕາ 97 (ປັບປຸງ) ອົງການກວດກາວຽກງານທ່ອງທ່ຽວ

ອົງການກວດກາວຽກງານທ່ອງທ່ຽວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 91 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

ມາດຕາ 98 ສິດ ແລະ ໜ້າທີ່ ຂອງອົງການກວດກາ

ອົງການກວດກາວຽກງານທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດແຜນຍຸດທະສາດ, ນະໂຍບາຍ, ແຜນການ, ໂຄງການ ແລະ ລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວ;

2. ກວດກາການດຳເນີນທຸລະກິດທ່ອງທ່ຽວ ເປັນຕົ້ນ ກວດກາເອກະສານ ແລະ ລົງກວດກາການເຄື່ອນໄຫວຕົວຈິງຢູ່ກັບທີ່;

3. ກວດກາການແກ້ໄຂຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທ່ອງທ່ຽວ;

4. ສະເໜີປະຕິບັດມາດຕະການຕ່າງໆ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃສ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວ;

5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານກວດກາກ່ຽວກັບການທ່ອງທ່ຽວ.

ຜູ້ຖືກກວດກາ ຕ້ອງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກວດກາ.

### ມາດຕາ 99 ຮູບການການກວດກາ

ຮູບການການກວດກາ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ທີ່ມີລັກສະນະກວດກາຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 100 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 101 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

### ມາດຕາ 102 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 103 **ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງສາມສິບວັນ ນັບແຕ່ວັນ ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບເລກທີ 10/ສພຊ ລົງວັນທີ 9 ພະຈິກ 2005.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້